## ແຜນຫຼົບພັຍປະຈຳເຮືອນຂອງທ່ານ:

### ສິ່ງຢ່າງທີ່ສາມາດຊ່ວຍຊີວິດທ່ານໄດ້

### ຕິດຕັ້ງໄວ້!



### ທົດສອບ!



### ເຮັດແຜນທີ່!



### ຝຶກປະຕິບັດ!



## ຢ່າຊັກຊ້າເກີນໄປໃນການເຮັດແຜນໜີໄຟປະຈຳເຮືອນ

**ມັນສາຍເກີນໄປ** ທີ່ຈະເລີ້ມເຮັດແຜນໜີໄຟໃນເວລາເກີດໄຟໄໝ້. ທຸກຄົນໃນເຮືອນຈຳເປັນຕ້ອງຕຽມພ້ອມລ່ວງໜ້າ, ເພື່ອວ່າເຂົາເຈົ້າຈະສາມາດລົງມືປະຕິບັດໄດ້ທັນທີເມື່ອໄດ້ຍິນສຽງສັນຍານໄຟໄໝ້.

ສັນຍານເຕືອນໄຟໄໝ້ຈະເຕືອນໃຫ້ເວລາທີ່ຈຳເປັນໃນການໜີໄຟ ຢ່າງປອດພັຍ. ການວາງແຜນໜີໄຟໃນເຮືອນແລະການຝຶກ ປະຕິບັດນັ້ນເປັນການຮັບປະກັນວ່າທຸກຄົນຮູ້ວິທີໃຊ້ເວລາທີ່ມີນັ້ນ ໃຫ້ມີປະສິດທິພາບຫຼາຍທີ່ສຸດ.

ແຜນໜີໄຟປະຈຳເຮືອນປະກອບດ້ວຍ:

- ທາງອອກສອງບ່ອນຈາກທຸກຫ້ອງໃນເຮືອນ (ທຳມະດາກໍແມ່ນປະຕູ ແລະປ່ອງຢ້ຽມ);
- ການຕິດຕັ້ງຢ່າງເໝາະສົມ, ເຮັດໃຫ້ສັນຍານເຕືອນໄຟໄໝ້ໃຊ້ການໄດ້ທົ່ວເຮືອນ;
- ສະຖານທີ່ພົບກັນນອກ ແລະໜ້າເຮືອນ ຊຶ່ງເປັນບ່ອນທີ່ທຸກຄົນຈະມາພົບກັນທັນທີຫຼັງຈາກອອກມາໄດ້ ແລ້ວ;
- ເຂົ້າເຖິງ ແລະຮູ້ຈັກເບີໂທຣ 9-1-1.

ຖ້າວ່າ ທ່ານມີຄຳຖາມ ຫຼື ຕ້ອງການຂໍ້ມູນຕື່ມກ່ຽວກັບສັນຍານເຕືອນໄຟໄໝ້ທີ່ບໍ່ເສັຽຄ່າ, ກະຣຸນາໂທຣ:

Portland Fire & Rescue

(503) 823-3700

# ລາຍການກວດກາ ສໍາລັບອັກຄີພັຍ



**PORTLAND FIRE & RESCUE**

**ພ້ອມຊ່ວຍເຫຼືອສະເໝີ**

***(503) 823-3700***

# ການເຕືອນແຕ່ຫົວທີ ແລະການຫຼົບໜີພັຍ

ໂອກາດຂອງຄອບຄົວຂອງທ່ານທີ່ຈະຫຼົບໜີຈາກໄຟໄໝ້ເຮືອນ ຂຶ້ນຢູ່ກັບການເຕືອນລ່ວງໜ້າຈາກສັນຍານເຕືອນໄຟໄໝ້ ແລະການວາງແຜນໜີລ່ວງໜ້າໃນສ່ວນຂອງທ່ານ.

ໄຟໄໝ້ສາມາດແຜ່ລາມຢ່າງໄວວາທົ່ວເຮືອນຂອງທ່ານ, ທ່ານມີເວລາເລັກນ້ອຍພຽງສອງນາທີທີ່ຈະໜີອອກມາຢ່າງປອດພັຍເມື່ອໄດ້ຍິນສຽງສັນຍານເຕືອນ.

ອີງຕາມການສຳຫຼວດຂອງສະມາຄົມປ້ອງກັນອັກຄີພັຍແຫ່ງ ຊາດ, ມີຄົວເຮືອນພຽງ**ໜຶ່ງໃນທຸກສາມ**ຄົວເຮືອນອາເມລິກັນ ເທົ່ານັ້ນທີ່ເຮັດແຜນໜີໄຟ ແລະຝຶກການໜີໄຟໄວ້.

ໃນຂະນະທີ່ **71%** ຂອງຊາວອາເມລິກັນມີແຜນໜີພັຍສຳລັບໃນກໍລະນີໄຟໄໝ້, ມີພຽງ **47%** ຂອງຄົນເຫຼົ່ານີ້ເທົ່ານັ້ນທີ່ໄດ້ຝຶກຫັດການໜີໄຟ.

**ໜຶ່ງໃນສາມ** ຂອງຄົວເຮືອນອາເມລິກັນຊຶ່ງໄດ້ຄິດປະເມີນວ່າ ເຂົາເຈົ້າຈະມີເວລາຢ່າງໜ້ອຍ 6 ນາທີກ່ອນທີ່ໄຟໄໝ້ໃນເຮືອນ ຂອງເຂົາເຈົ້າຈະເຮັດໃຫ້ເປັນອັນຕະລາຍເຖິງຊີວິດ. ເວລາທີ່ມີນັ້ນມັກຈະໜ້ອຍ. ແລະມີພຽງ **8%** ເທົ່ານັ້ນ ທີ່ເວົ້າວ່າ ຄວາມຄິດທຳອິດຂອງເຂົາເຈົ້າເມື່ອໄດ້ຍິນ ສັນຍານເຕືອນໄຟໄໝ້ກໍຄືການໜີອອກໄປ!

ນັ້ນຈຶ່ງເປັນເຫດຜົນວ່າເປັນຫຍັງມັນຈຶ່ງສຳຄັນຫຼາຍທີ່ຈະຕິດຕັ້ງສັນຍານເຕືອນໃນເຮືອນຂອງທ່ານຢ່າງຖືກຕ້ອງ ແລະມີແຜນໜີໄຟໄວ້ພ້ອມໃຊ້.

ແຜ່ນພັບນີ້ຈະພາທ່ານໄປເທື່ອລະກ້າວ.

# ສັນຍານເຕືອນໄຟໄໝ້ : ການປ້ອງກັນຂັ້ນທຳອິດຂອງທ່ານ

- ຕິດຕັ້ງສັນຍານເຕືອນໄວ້ໃນທຸກຊັ້ນຂອງເຮືອນ ໂດຍໃຫ້ຢູ່ນອກ ບໍລິເວນບ່ອນນອນພັກຜ່ອນ ແລະໃນຫ້ອງນອນແຕ່ລະຫ້ອງ.
- ໃຫ້ແນ່ໃຈວ່າ ສັນຍານເຕືອນຕິດຢູ່ເທິງເພດານ ຫຼື 4-12 ນິ້ວຕ່ຳກວ່າເພດານໂດຍຢູ່ເທິງຝາຜະໜັງ. ໃຫ້ຕິດຕັ້ງໄວ້ໃຫ້ຫ່າງ ຈາກຊ່ອງລະບາຍອາກາດ ຫຼື ແຜງລະບາຍອາກາດ; ບ່ອນທີ່ມີ ອາກາດໄຫຼວຽນ ຫຼື "ຈຸດອັບ" ແມ່ນບ່ອນທີ່ຄວນຫຼີກລ່ຽງ.
- ປະຕິບັດຕາມຄຳແນະນຳຂອງຜູ້ຜະລິດສຳລັບການບຳລຸງຮັກສາ ທີ່ເໝາະສົມ. ສັນຍານເຕືອນໄຟໄໝ້ສາມາດຊ່ວຍຊີວິດໄດ້, ແຕ່ສະເພາະຖ້າວ່າ ມີການຕິດຕັ້ງແລະບຳລຸງຮັກສາຢ່າງເໝາະສົມ.
- ຝຸ່ນທີ່ຫຼາຍເກີນໄປ, ໄຂມັນ, ຫຼື ວັດສະດຸອື່ນໆ ໃນອຸປະກອນ ສັນຍານເຕືອນອາດເຮັດໃຫ້ສັນຍານເຕືອນໃຊ້ການບໍ່ໄດ້. ການໃຊ້ເຄື່ອງດູດຝຸ່ນເຕົາປີ້ງແມ່ນໃຊ້ການໄດ້ສຳລັບທຳຄວາມ ສະອາດສັນຍານເຕືອນຂອງທ່ານ.

ເພື່ອປົກປ້ອງເຮືອນແລະຄອບຄົວຂອງທ່ານ, ທ່ານຄວນສາມາດ ໝາຍໃສ່ຄຳວ່າ ແມ່ນ ໃນຂໍ້ເຫຼົ່ານີ້ :

| **ສັນຍານເຕືອນໄຟໄໝ້** | ແມ່ນ | ບໍ່ແມ່ນ |
|---|---|---|
| 1. ສັນຍານເຕືອນໄຟໄໝ້ໄດ້ຮັບການຕິດຕັ້ງ ຢູ່ທຸກຊັ້ນຂອງເຮືອນ. | ☐ | ☐ |
| 2. ສັນຍານເຕືອນໄຟໄໝ້ແມ່ນຕິດຕັ້ງ ຢູ່ໃກ້ຫ້ອງນອນ, ຢູ່ເທິງເພດານ ຫຼື 4-12 ນິ້ວຕ່ຳກວ່າເພດານໂດຍຢູ່ເທິງຝາຜະໜັງ. | ☐ | ☐ |
| 3. ສັນຍານເຕືອນໄຟໄໝ້ໄດ້ຮັບການ ທົດສອບຕາມຄຳແນະນຳຂອງຜູ້ຜະລິດ. | ☐ | ☐ |
| 4. ແບັດເຕີຣີມີໃສ່ໄວ້ພ້ອມໃຊ້ງານເມື່ອຈຳເປັນ. | ☐ | ☐ |
| 5. ສັນຍານເຕືອນສາມາດເຮັດໃຫ້ໄດ້ຍິນ ບໍ່ວ່າກຳລັງຫຼັບຢູ່ ຫຼື ຕື່ນຢູ່ ກໍຕາມ. | ☐ | ☐ |

# ແຜນຫຼົບພັຍຂອງທ່ານ: ທຸກວິນາທີມີຄ່າຫຼາຍ

- ເຮັດແຜນໜີໄຟໃນເຮືອນແລະຝຶກປະຕິບັດ.
- ສອນລູກຂອງທ່ານໃຫ້ຮູ້ຈັກໃຊ້ລະບົບເບີໂທຣ 9-1-1 ຢ່າງຖືກຕ້ອງ.
- ຂຽນແຜນທີ່ຂອງແຕ່ລະຊັ້ນໃນເຮືອນຂອງທ່າ ນ , ໂດຍສະແດງໃຫ້ເຫັນປະຕູ ແລະປ່ອງຢ້ຽມທັງໝົດ.
- ຫາບ່ອນທາງອອກສອງບ່ອນທີ່ຈະອອກຈາກແ ຕ່ລະຫ້ອງ.
- ໃຫ້ແນ່ໃຈວ່າ ປະຕູ ແລະປ່ອງຢ້ຽມທັງໝົດທີ່ພາອອກ ໄປຂ້າງນອກໄດ້ນັ້ນສາມາດເປີດໄດ້ຢ່າງງ່າຍດາຍ.
- ສອນລູກຫລານໃຫ້ຮູ້ວິທີຫຼົບໜີດ້ວຍຕົນເອງ ໃນກໍລະນີທີ່ທ່ານບໍ່ສາມາດຊ່ວຍເຂົາໄດ້.

ເພື່ອປົກປ້ອງເຮືອນແລະຄອບຄົວຂອງທ່ານ, ທ່ານຄວນສາມາດ ໝາຍໃສ່ຄຳວ່າ ແມ່ນ ໃນຂໍ້ເຫຼົ່ານີ້:

| **ແຜນຫຼົບພັຍປະຈຳເຮືອນ** | ແມ່ນ | ບໍ່ແມ່ນ |
|---|---|---|
| 1. ທ່ານມີແຜນໜີພັຍບໍ່ ? | ☐ | ☐ |
| 2. ມີການຝຶກປະຕິບັດເປັນປະຈຳບໍ່? | ☐ | ☐ |
| 3. ແຜນໜີພັຍ ລວມມີສະຖານທີ່ທີ່ ປອດພັຍໃນການພົບປະກັນ ແມ່ນບໍ່? | ☐ | ☐ |
| 4. ມີທາງອອກສອງທາງທີ່ອອກຈາກທຸກຫ້ອງ ແມ່ນບໍ່? | ☐ | ☐ |
| 5. ເບີໂທຣເຫດສຸກເສີນ 9-1-1 ແມ່ນຕິດໄວ້ຢູ່ບ່ອນໂທຣະສັບທຸກ | ☐ | ☐ |